ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 109 ປປທ

ນະຄອນຫຼວງວຽງຈັນ, ວັນທີ 18 ສິງຫາ 2008

# ລັດຖະດຳລັດ

## ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ທັດຖະກຳ

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 95/ສພຊ, ລົງວັນທີ 25 ກໍລະກົດ 2008 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍ ທັດຖະກຳ;
- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 23/ຄປຈ, ລົງວັນທີ 11 ສິງຫາ 2008.

*ປະທານປະເທດ*

*ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ :*

*ມາດຕາ 1* : ປະກາດໃຊ້ກົດໝາຍວ່າດ້ວຍ ທັດຖະກຳ.

*ມາດຕາ 2* : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ.

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 95 /ສພຊ

# ມະຕິຕົກລົງ
ຂອງ
ສະພາແຫ່ງຊາດ ແຫ່ງ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍ ທັດຖະກຳ

- ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະ ພາແຫ່ງຊາດ.

ພາຍຫລັງທີ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ VI ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ທັດຖະກຳ ໃນວາລະປະຊຸມຕອນບ່າຍຂອງວັນທີ 25 ກໍລະກົດ 2008,

### ກອງປະຊຸມໄດ້ຕົກລົງ:

ມາດຕາ 1. ຮັບຮອງເອົາກົດໝາຍວ່າດ້ວຍ ທັດຖະກຳ ດ້ວຍຄະແນນສຽງເຫັນດີ ເປັນສ່ວນຫລາຍ.

ມາດຕາ 2. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 25 ກໍລະກົດ 2008

ປະທານສະພາແຫ່ງຊາດ

ສະພາແຫ່ງຊາດ ປະທານ

ທອງສິງ ທຳມະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 02 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 25 ກໍລະກົດ 2008

# ກົດໝາຍ
# ວ່າດ້ວຍຫັດຖະກຳ

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ກົດໝາຍວ່າດ້ວຍຫັດຖະກຳ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ການສົ່ງເສີມ ແລະ ການພັດທະນາ ວຽກງານຫັດຖະກຳ ເພື່ອເຮັດໃຫ້ ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານດັ່ງກ່າວ ມີການຂະຫຍາຍຕົວ, ສ້າງຜະລິດຕະພັນຫັດຖະກຳ ໃຫ້ກາຍເປັນສິນຄ້າ ທີ່ມີຄຸນນະພາບສູງ ແນໃສ່ສ້າງວຽກເຮັດງານທຳ ແລະ ສ້າງລາຍຮັບໃຫ້ແກ່ປະຊາຊົນບັນດາເຜົ່າ ທັງເປັນການອະນຸລັກມູນເຊື້ອ, ສີໄມ້ລາຍມືທີ່ມີຄຸນຄ່າທາງດ້ານສິນລະປະ ວັດທະນະທຳ ແລະ ເສດຖະກິດ ຊຶ່ງມີມາແຕ່ບູຮານນະການໃຫ້ຍືນຍົງຄົງຢູ່ຕະຫຼອດໄປ.

### ມາດຕາ 2. ຫັດຖະກຳ

ຫັດຖະກຳ ແມ່ນ ຂະບວນການຜະລິດ ຂອງຂະແໜງເສດຖະກິດໜຶ່ງທີ່ສຳຄັນ ຊຶ່ງນຳໃຊ້ແຮງງານທີ່ມີຄວາມຊຳນານງານ ແລະ ພູມປັນຍາ ຂອງຄົນເປັນຕົ້ນຕໍ ເພື່ອສ້າງເປັນຜະລິດຕະພັນທີ່ມີຄວາມປານີດງົດງາມ, ມີຄຸນຄ່າສູງທາງດ້ານສິນລະປະວັດທະນະທຳ, ເສດຖະກິດ ແລະ ມີເອກະລັກສະເພາະຕົວ.

### ມາດຕາ 3. ຄຸນລັກສະນະຕົ້ນຕໍຂອງຜະລິດຕະພັນຫັດຖະກຳ

ຄຸນລັກສະນະຕົ້ນຕໍຂອງຜະລິດຕະພັນຫັດຖະກຳ ມີ ດັ່ງນີ້:

1. ນຳໃຊ້ແຮງງານຄົນເປັນຕົ້ນຕໍ ແລະ ສາມາດນຳໃຊ້ເຄື່ອງຈັກຊ່ວຍແຮງຈຳນວນໜຶ່ງ;
2. ມີຄຸນຄ່າສູງທາງດ້ານສິນລະປະ ວັດທະນະທຳ ແລະ ເສດຖະກິດ;

3. ມີເອກະລັກສະເພາະຕົວ;
4. ຜະລິດເພື່ອຊົມໃຊ້ ແລະ ເປັນສິນຄ້າ;
5. ມີເອກະລັກຂອງຊາດ, ຂອງທ້ອງຖິ່ນ ແລະ ບັນດາເຜົ່າ;
6. ມີລັກສະນະປະຫວັດສາດຂອງແຕ່ລະຍຸກ ແຕ່ລະສະໄໝ.

ມາດຕາ 4. ການອະທິບາຍຄຳສັບ

ຄຳສັບຕ່າງໆທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ຜູ້ປະກອບການ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງລວມໝູ່ຂອງປະຊາຊົນ ທີ່ລົງທຶນ, ດຳເນີນການຜະລິດ ແລະ ບໍລິການຈຳໜ່າຍ ສິນຄ້າຫັດຖະກຳ;
2. ຊາວຊ່າງຫັດຖະກຳ ໝາຍເຖິງ ຊ່າງຫັດຖະກຳ ແລະ ນາຍຊ່າງຫັດຖະກຳ ຊຶ່ງເປັນ ຜູ້ຜະລິດ ຫຼື ຜູ້ດຳເນີນການ ກ່ຽວກັບການຜະລິດຫັດຖະກຳ;
3. ກິດຈະການ ໝາຍເຖິງ ບັນດາວຽກງານທີ່ດຳເນີນຢູ່ໃນໂຮງງານຫັດຖະກຳ ແລະ ໂຮງຊ່າງຫັດຖະກຳຄອບຄົວ;
4. ເຈົ້າໜ້າທີ່ ໝາຍເຖິງ ພະນັກງານວິຊາການທີ່ຖືກແຕ່ງຕັ້ງ ຫຼື ຖືກມອບໝາຍໜ້າທີ່ຈາກການຈັດຕັ້ງຂັ້ນເທິງ ເພື່ອປະຕິບັດວຽກງານຫັດຖະກຳ;
5. ການບຳບັດສິ່ງເສດເຫຼືອ ໝາຍເຖິງ ການປັບປຸງ, ດັດແປງ ສິ່ງເສດເຫຼືອ ຫຼື ມົນລະພິດ ຈາກການຜະລິດຫັດຖະກຳ ໃຫ້ຫຼຸດຜ່ອນລົງ ເຊັ່ນ: ນ້ຳເປື້ອນ, ສຽງ, ກິ່ນ ແລະ ມົນລະພິດອື່ນ;
6. ລະບົບຄ້ຳປະກັນສິນເຊື່ອທະນາຄານ ໝາຍເຖິງ ການຄ້ຳປະກັນ ດ້ວຍຊັບສິນຂອງຜູ້ກູ້ຢືມ ຫຼື ດ້ວຍການຈັດຕັ້ງ ຫຼື ບຸກຄົນອື່ນ;
7. ພາຫະນະສື່ມວນຊົນ ໝາຍເຖິງ ສື່ສິ່ງພິມ ແລະ ສື່ເອເລັກໂຕຣນິກ ລວມທັງ ຜະລິດຕະພັນສື່ມວນຊົນ ຊຶ່ງມີໜັງສືພິມ, ໃບຂ່າວສານ, ຈົດໝາຍເຫດ, ວາລະສານ, ລາຍການວິທະຍຸ, ລາຍການໂທລະພາບ, ລາຍການໂທລະໂຄ່ງ, ອິນເຕີເນັດ, ເວບໄຊ, ກາແຊັດ, ຊີດີ, ວີຊີດີ, ດີວີດີ ແລະ ອື່ນໆ;
8. ໂລຫະ ໝາຍເຖິງ ວັດຖຸທີ່ນຳຜ່ານກະແສໄຟຟ້າ ເຊັ່ນ: ເຫຼັກ, ທອງ, ຄຳ,ເງິນ ແລະ ວັດຖຸອື່ນ;
9. ອະໂລຫະ ໝາຍເຖິງ ວັດຖຸທີ່ບໍ່ນຳຜ່ານກະແສໄຟຟ້າ ເຊັ່ນ: ແກ້ວ, ຢາງພະລາສະຕິກ, ໄມ້ ແລະວັດຖຸອື່ນ;
10. ກຳມະວິທີ ໝາຍເຖິງ ວິທີການ ແລະ ຂັ້ນຕອນ ການຜະລິດ ;
11. ເຈ້ຍພື້ນເມືອງ ໝາຍເຖິງ ເຈ້ຍທີ່ເຮັດດ້ວຍ ເປືອກສາ, ໜໍ່ໄມ້, ເຟືອງ ແລະ ພືດອື່ນ.

ມາດຕາ 5. ນະໂຍບາຍກ່ຽວກັບວຽກງານຫັດຖະກຳ

ລັດ ມີນະໂຍບາຍກ່ຽວກັບວຽກງານຫັດຖະກຳ ເຊັ່ນ: ນະໂຍບາຍ ການຄຸ້ມຄອງ, ການສົ່ງເສີມ ແລະ ພັດທະນາ, ການອະນຸລັກ ແລະ ການສະຫງວນ ເພື່ອໃຫ້ຂະແໜງການຫັດຖະກຳມີການຂະຫຍາຍຕົວ ຢ່າງຍືນຍົງ.

ມາດຕາ 6. ຫຼັກການກ່ຽວກັບວຽກງານຫັດຖະກຳ

ວຽກງານຫັດຖະກຳ ຕ້ອງດຳເນີນຕາມຫຼັກການ ດັ່ງນີ້:

1. ຄຸ້ມຄອງ ແລະ ພັດທະນາການຜະລິດຫັດຖະກຳແບບຍືນຍົງ ;
2. ຮັບປະກັນການປົກປັກຮັກສາສິ່ງແວດລ້ອມ;
3. ອະນຸລັກ, ປົກປັກຮັກສາຫັດຖະກຳທີ່ເປັນມູນເຊື້ອ ແລະ ມີເອກະລັກສະເພາະຂອງຊາດ ແລະ ຂອງຊົນເຜົ່າ ;
4. ຮັບປະກັນຄວາມປອດໄພຂອງຜູ້ຊົມໃຊ້ສິນຄ້າຫັດຖະກຳ;
5. ເຄົາລົບ ແລະ ປະຕິບັດ ສົນທິສັນຍາສາກົນທີ່ ສ.ປ.ປ. ລາວ ເປັນພາຄີ.

ມາດຕາ 7. ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ໂຮງງານຫັດຖະກຳຂະໜາດຕ່າງໆ ແລະ ໂຮງຊ່າງຫັດຖະກຳຄອບຄົວ ປະເພດຕ່າງໆ , ຊາວຊ່າງຫັດຖະກຳ ແລະ ຜູ້ຄຸ້ມຄອງວຽກງານຫັດຖະກຳ.

ມາດຕາ 8. ການຮ່ວມມືສາກົນ

ລັດ ຊຸກຍູ້ສົ່ງເສີມ ໃຫ້ມີການພົວພັນຮ່ວມມືກັບສາກົນ ໃນວຽກງານຫັດຖະກຳ ດ້ວຍການຍາດແຍ່ງການຊ່ວຍເຫຼືອ ແລກປ່ຽນຂໍ້ມູນຂ່າວສານ, ເຕັກໂນໂລຊີ, ບົດຮຽນ ແລະ ປະສົບການ, ຍົກລະດັບສີມືແຮງງານ ແລະ ການຄຸ້ມຄອງທຸລະກິດ, ການຕະຫຼາດ ແລະ ອື່ນໆ.

## ພາກທີ II
## ກິດຈະການຫັດຖະກຳ

### ໝວດທີ 1
### ໂຮງງານຫັດຖະກຳ ແລະ ໂຮງຊ່າງຫັດຖະກຳຄອບຄົວ

ມາດຕາ 9. ໂຮງງານຫັດຖະກຳ

ໂຮງງານຫັດຖະກຳ ແມ່ນ ສະຖານທີ່ ແລະ ອາຄານ ທີ່ທຳການຜະລິດຫັດຖະກຳ ດ້ວຍການນຳໃຊ້ແຮງງານຄົນເປັນຕົ້ນຕໍ ແຕ່ 10 ຄົນຂຶ້ນໄປ ແລະ ສາມາດນຳໃຊ້ເຄື່ອງຈັກຈຳນວນໜຶ່ງເປັນເຄື່ອງຊ່ວຍແຮງ.

ມາດຕາ 10. ຂະໜາດຂອງໂຮງງານຫັດຖະກຳ

ໂຮງງານຫັດຖະກຳ ຈັດເປັນ ສາມ ຂະໜາດ ຄື:

1. ໂຮງງານຫັດຖະກຳຂະໜາດ I ຊຶ່ງແມ່ນໂຮງງານຫັດຖະກຳຂະໜາດໃຫຍ່ ທີ່ມີແຮງງານລວມແຕ່ 200 ຄົນ ຂຶ້ນໄປ ແລະ ສາມາດນຳໃຊ້ເຄື່ອງຈັກຊ່ວຍແຮງຈຳນວນໜຶ່ງ ;
2. ໂຮງງານຫັດຖະກຳຂະໜາດ II ຊຶ່ງແມ່ນໂຮງງານຫັດຖະກຳຂະໜາດກາງ ທີ່ມີແຮງງານລວມ ແຕ່ 51 199 ຄົນ ແລະ ສາມາດນຳໃຊ້ເຄື່ອງຈັກຊ່ວຍແຮງຈຳນວນໜຶ່ງ ;

3. ໂຮງງານຫັດຖະກຳຂະໜາດ III ຊຶ່ງແມ່ນໂຮງງານຫັດຖະກຳຂະໜາດນ້ອຍ ທີ່ມີແຮງງານລວມ ແຕ່ 10 50 ຄົນ ແລະ ສາມາດນຳໃຊ້ເຄື່ອງຈັກຊ່ວຍແຮງຈຳນວນໜຶ່ງ.

ມາດຕາ 11. **ໂຮງຊ່າງຫັດຖະກຳຄອບຄົວ**

ໂຮງຊ່າງຫັດຖະກຳຄອບຄົວ ແມ່ນ ສະຖານທີ່ ແລະ ອາຄານ ທີ່ທຳການຜະລິດຫັດຖະກຳໃນ ລະດັບຄົວເຮືອນ ດ້ວຍການນຳໃຊ້ແຮງງານຄົນເປັນຕົ້ນຕໍ ແຕ່ 9 ຄົນລົງມາ ແລະ ສາມາດນຳໃຊ້ເຄື່ອງຈັກຈຳນວນໜຶ່ງເປັນເຄື່ອງຊ່ວຍແຮງ.

ມາດຕາ 12. **ປະເພດຂອງໂຮງຊ່າງຫັດຖະກຳ ຄອບຄົວ**

ໂຮງຊ່າງຫັດຖະກຳຄອບຄົວຈັດເປັນ ສອງ ປະເພດ ຄື:

1. ໂຮງຊ່າງຫັດຖະກຳຄອບຄົວ ປະເພດ I ຊຶ່ງດຳເນີນກິດຈະການຫັດຖະກຳເປັນອາຊີບຕົ້ນຕໍຂອງຄອບຄົວ ;
2. ໂຮງຊ່າງຫັດຖະກຳຄອບຄົວ ປະເພດ II ຊຶ່ງດຳເນີນກິດຈະການຫັດຖະກຳເປັນອາຊີບສຳຮອງ ຂອງຄອບ ຄົວ.

ມາດຕາ 13. **ຂະແໜງວິຊາຊີບຫັດຖະກຳ**

ຂະແໜງວິຊາຊີບຫັດຖະກຳ ຕົ້ນຕໍ ມີ ດັ່ງນີ້:

1. ຂະແໜງແຜ່ນແພພື້ນເມືອງ ;
2. ຂະແໜງໄມ້, ຫວາຍ, ໄມ້ປ່ອງ ແລະ ເຄືອໄມ້;
3. ຂະແໜງເຈ້ຍພື້ນເມືອງ;
4. ຂະແໜງສິນລະປະໂລຫະ, ອະໂລຫະ;
5. ຂະແໜງປັ້ນດິນເຜົາ ;
6. ຂະແໜງເຄື່ອງປະດັບ ແລະ ເຄື່ອງເອ້ຍ້ອງ ;
7. ຂະແໜງອາຫານ ແລະ ເຄື່ອງດື່ມ ພື້ນເມືອງ .

## ໝວດທີ 2

## ການອະນຸລັກ, ການສະຫງວນ ແລະ ການຮັກສາມໍລະດົກຫັດຖະກຳ

ມາດຕາ 14. ການອະນຸລັກຫັດຖະກຳ

ການອະນຸລັກຫັດຖະກຳ ແມ່ນ ການຮັກສາ, ປົກປ້ອງ ບໍ່ໃຫ້ຫັດຖະກຳ ຖືກທຳລາຍ ຫຼື ສູນຫາຍໄປ. ການອະນຸລັກ ຕ້ອງໄປຄຽງຄູ່ກັບການພັດທະນາຫັດຖະກຳ ເພື່ອໃຫ້ມີຄຸນນະພາບ ແລະ ທັນສະໄໝ.

ມາດຕາ 15. ຂະແໜງຫັດຖະກຳທີ່ອະນຸລັກ

ຂະແໜງຫັດຖະກຳ ທີ່ອະນຸລັກ ມີ ດັ່ງນີ້:

1. ຂະແໜງແຜ່ນແພພື້ນເມືອງ :

   ການຕ່ຳຫູກ;

   ການຍ້ອມສີທຳມະຊາດ;

   ການຫຍິບ, ການປັກ, ການຖັກ, ການແສ່ວ ແລະ ດອກດວງ;

   ການອອກແບບ;

   ການມັດໝີ່ ;

   ການເຂັນຝ້າຍ, ການປູກມອນ, ການລ້ຽງມ້ອນ, ການສາວໄໝ ແລະ ອື່ນໆ.

2. ຂະແໜງໄມ້, ຫວາຍ, ໄມ້ປ່ອງ ແລະ ເຄືອໄມ້:

   ການຈັກສານ;

   ການຄວັດ, ການແກະສະລັກ ແລະ ອື່ນໆ.

3. ຂະແໜງເຈ້ຍພື້ນເມືອງ:

   ການຜະລິດເຈ້ຍສາ;

   ການຜະລິດເຈ້ຍເຟືອງ ແລະ ອື່ນໆ.

4. ຂະແໜງສິນລະປະໂລຫະ, ອະໂລຫະ:

   ການຫຼອມ ;

   ການຫຼໍ່ ;

   ການຄວັດ,ການແກະສະລັກ ງາ, ເຂົາສັດ ແລະ ອື່ນໆ.

5. ຂະແໜງປັ້ນດິນເຜົາ:

   ການປັ້ນດິນເຜົາ ;

   ການຜະລິດດິນຈີ່, ດິນຂໍ ແລະ ອື່ນໆ.

6. ຂະແໜງເຄື່ອງປະດັບ ແລະ ເຄື່ອງເອ້ຢ້ອງ :

   ການຕີ ເງິນ, ຄຳ, ທອງ ທີ່ເປັນ ລວດລາຍສິນລະປະ ພື້ນເມືອງລາວ ;

   ການຕີງ້າວ, ດາບ ແລະ ອື່ນໆ.

7. ຂະແໜງອາຫານ ແລະ ເຄື່ອງດື່ມ ພື້ນເມືອງ :

   ການຜະລິດແຈ່ວບອງ ;

   ການຜະລິດໄຄແຜ່ນ ;

   ການຜະລິດເຄື່ອງດື່ມພື້ນເມືອງ ແລະ ອື່ນໆ.

ມາດຕາ 16. **ວິທີການອະນຸລັກຫັດຖະກຳ**

ວິທີການອະນຸລັກຫັດຖະກຳ ຕົ້ນຕໍ ມີ ດັ່ງນີ້:

1. ດຳເນີນການຄົ້ນຄວ້າ ຂຽນເປັນປຶ້ມຕຳລາ ສຳລັບກຳມະວິທີການຜະລິດຫັດຖະກຳທີ່ໂດດເດັ່ນ ;
2. ເກັບກຳ ແລະ ຂຶ້ນບັນຊີ ລາຍຊື່ຂອງຊາວຊ່າງຫັດຖະກຳທີ່ມີຊື່ສຽງ ເພື່ອເປັນຜູ້ສິດສອນຖ່າຍທອດວິຊາໃຫ້ຄົນລຸ້ນຫຼັງ ;
3. ເກັບກຳ ແລະ ຂຶ້ນບັນຊີ ຜະລິດຕະພັນຫັດຖະກຳທີ່ໂດດເດັ່ນ ເພື່ອນຳມາຄົ້ນຄວ້າ, ວາງສະແດງ, ໂຄສະນາເຜີຍແຜ່ ແລະ ປົກປັກຮັກສາ ;
4. ນຳເອົາປຶ້ມຕຳລາກ່ຽວກັບກຳມະວິທີການຜະລິດຫັດຖະກຳ ເພື່ອສ້າງເປັນຫຼັກສູດ ການຮຽນ ການສອນ ;
5. ສ້າງສູນຫັດຖະກຳ, ສູນຝຶກອົບຮົມວິຊາຊີບ ແລະ ຫໍພິພິດທະພັນ ຫັດຖະກຳ ;
6. ນຳເອົາວຽກງານຫັດຖະກຳໄປຈົດທະບຽນຊັບສິນທາງປັນຍາ.

ມາດຕາ 17. **ການສະຫງວນຫັດຖະກຳ**

ການສະຫງວນຫັດຖະກຳ ແມ່ນ ການຮັກສາກຳມະວິທີການຜະລິດຫັດຖະກຳໃດໜຶ່ງ ໄວ້ໃຫ້ສະເພາະພົນລະເມືອງລາວ ໃນກຳນົດເວລາທີ່ແນ່ນອນ.

ມາດຕາ 18. **ຂະແໜງຫັດຖະກຳທີ່ສະຫງວນ**

ຂະແໜງຫັດຖະກຳທີ່ສະຫງວນ ມີ ດັ່ງນີ້:

1. ຂະແໜງແຜ່ນແພພື້ນເມືອງ :
   ການອອກແບບ, ການເກັບ, ການຈົກ ລວດລາຍ ແລະ ການມັດໝີ່ ແບບພື້ນເມືອງລາວ;
2. ຂະແໜງ ໄມ້, ສິນລະປະໂລຫະ, ອະໂລຫະ, ຂະແໜງ ເຄື່ອງປະດັບ ແລະ ເຄື່ອງເອ້ຍ້ອງ:
   ການອອກແບບ ລວດລາຍພື້ນເມືອງລາວ ທີ່ພົວພັນໃນແຕ່ລະຍຸກ ແຕ່ລະສະໄໝ.

ມາດຕາ19: **ວິທີການສະຫງວນຫັດຖະກຳ**

ວິທີການສະຫງວນ ຫັດຖະກຳ ຕົ້ນຕໍ ມີ ດັ່ງນີ້ :

- ນຳເອົາກຳມະວິທີການຜະລິດຫັດຖະກຳທີ່ສະຫງວນ ໄປຈົດທະບຽນ ຊັບສິນທາງປັນຍາ ແລະ ເອົາຂຶ້ນບັນຊີກິດຈະການຫັດຖະກຳ ທີ່ລັດຄຸ້ມຄອງ ;
- ການເຜີຍແຜ່ ແລະ ການສິດສອນ ກຳມະວິທີການຜະລິດຫັດຖະກຳທີ່ສະຫງວນ ຕາມລະບຽບການ ຫຼື ຕາມການອະນຸຍາດ ຂອງຂະແໜງການທີ່ກ່ຽວຂ້ອງ .

ມາດຕາ 20. **ມໍລະດົກຫັດຖະກຳ**

ມໍລະດົກຫັດຖະກຳ ແມ່ນຜະລິດຕະພັນຫັດຖະກຳ ທີ່ປະຊາຊົນລາວສ້າງຂຶ້ນ ທີ່ມີຄຸນຄ່າສູງທາງດ້ານວັດທະນະທຳ, ປະຫວັດສາດ, ເປັນຊັບສິນບັດອັນລ້ຳຄ່າ ແລະ ເປັນຊັບສິນລວມ ຂອງວົງຄະນະຍາດແຫ່ງຊາດ.

ການປົກປັກຮັກສາມໍລະດົກຫັດຖະກຳ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍ ມໍລະດົກແຫ່ງຊາດ.

## ໝວດທີ 3
## ການສ້າງຕັ້ງ ແລະ ການດຳເນີນ
## ກິດຈະການ ໂຮງງານຫັດຖະກຳ ແລະ ໂຮງຊ່າງຫັດຖະກຳຄອບຄົວ

ມາດຕາ 21. **ການສ້າງຕັ້ງໂຮງງານຫັດຖະກຳ**

ການສ້າງຕັ້ງໂຮງງານຫັດຖະກຳທຸກຂະໜາດ ໃຫ້ປະຕິບັດຕາມ ກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ມາດຕາ 22. **ການສ້າງຕັ້ງໂຮງຊ່າງຫັດຖະກຳຄອບຄົວ**

ໂຮງຊ່າງຫັດຖະກຳຄອບຄົວທຸກປະເພດ ສາມາດດຳເນີນກິດຈະການໄດ້ໃນທັນໃດ. ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ ລົງຕິດຕາມກວດກາ ແລະ ເກັບກຳຂໍ້ມູນ ເພື່ອຄຸ້ມຄອງ ແລະ ຊຸກຍູ້ສົ່ງເສີມ .

ມາດຕາ 23. **ການນຳໃຊ້ວັດຖຸດິບ**

ການນຳໃຊ້ວັດຖຸດິບ ຕ້ອງຕິດພັນກັບການຊຸກຍູ້ສົ່ງເສີມການຜະລິດພາຍໃນ ເປັນຕົ້ນຕໍ.

ການນຳໃຊ້ວັດຖຸດິບຈາກທຳມະຊາດ ຕ້ອງມີການປະຢັດ, ຮັບປະກັນຄວາມຍືນຍົງ ແລະ ຖືກຕ້ອງຕາມລະບຽບກົດໝາຍ.

ຜູ້ປະກອບການຫັດຖະກຳ ຕ້ອງໄດ້ເອົາໃຈໃສ່ໃນການ ປູກຝັງ ລ້ຽງສັດ ເພື່ອເປັນວັດຖຸດິບທົດແທນ ສະໜອງໃຫ້ແກ່ການຜະລິດ.

ມາດຕາ 24. **ການນຳໃຊ້ແຮງງານ**

ການນຳໃຊ້ແຮງງານທຳການຜະລິດຫັດຖະກຳ ຕ້ອງນຳໃຊ້ແຮງງານພາຍໃນ ເປັນຕົ້ນຕໍ, ພ້ອມກັນນັ້ນ ກໍໃຫ້ເອົາໃຈໃສ່ຍົກລະດັບສີມືແຮງງານ, ຄວາມຊຳນານງານ ເພື່ອໃຫ້ຜະລິດຕະພັນຫັດຖະກຳມີຄຸນນະພາບ ພ້ອມທັງເປັນການອະນຸລັກ, ປົກປັກຮັກສາ ສີໄມ້ລາຍມືທີ່ເປັນມູນເຊື້ອ ແລະ ມີເອກະລັກສະເພາະຂອງຊາດ.

**ມາດຕາ 25. ການພັດທະນາຄຸນນະພາບສິນຄ້າຫັດຖະກຳ**

ຜູ້ປະກອບການ ຕ້ອງເອົາໃຈໃສ່ພັດທະນາຄຸນນະພາບສິນຄ້າຫັດຖະກຳ ໃຫ້ສາມາດແຂ່ງຂັນໃນຕະຫຼາດພາຍໃນ ແລະ ສາກົນໄດ້ ດ້ວຍວິທີການຕ່າງໆ ເປັນຕົ້ນ: ການປັບປຸງຄຸນນະພາບການຜະລິດແບບຄົບຊຸດ, ການຄົ້ນຄວ້ານຳໃຊ້ກຳມະວິທີເຕັກໂນໂລຊີ ທີ່ກ້າວໜ້າ.

## ໝວດທີ 4
## ຊ່າງຫັດຖະກຳ ແລະ ນາຍຊ່າງຫັດຖະກຳ

**ມາດຕາ 26. ຊ່າງຫັດຖະກຳ ແລະ ນາຍຊ່າງຫັດຖະກຳ**

ຊ່າງຫັດຖະກຳ ແມ່ນ ບຸກຄົນທີ່ມີວິຊາຊີບດ້ານຫັດຖະກຳໃດໜຶ່ງ ຊຶ່ງໄດ້ຮັບການຢັ້ງຢືນຈາກ ໂຮງຮຽນ ຫຼື ສູນຝຶກອົບຮົມ ແລະ ການຝຶກອົບຮົມ ຕາມຫຼັກສູດວິຊາຊີບຫັດຖະກຳ.

ນາຍຊ່າງຫັດຖະກຳ ແມ່ນ ຊ່າງຫັດຖະກຳ ຜູ້ທີ່ມີ ຄຸນວຸດທິ, ຄວາມຊຳນານງານ ດ້ານວິຊາຊີບຫັດຖະກຳ ແລະ ມີປະສົບການສູງ ໃນວຽກງານຫັດຖະກຳ ຢ່າງໜ້ອຍຫ້າປີ.

**ມາດຕາ 27. ການໃຫ້ນາມມະຍົດ ຊ່າງຫັດຖະກຳ ແລະ ນາຍຊ່າງຫັດຖະກຳ**

ລັດ ຕ້ອງຄົ້ນຄວ້າ ວາງເງື່ອນໄຂ ມາດຕະຖານ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຊັ້ນນາມມະຍົດ ລະດັບຕ່າງໆ ຂອງຊ່າງຫັດຖະກຳ ແລະ ນາຍຊ່າງຫັດຖະກຳ ເພື່ອເປັນການຍ້ອງຍໍ ຊົມເຊີຍ ທາງດ້ານວັດຖຸ ແລະ ຈິດໃຈ ຕາມຄວາມເໝາະສົມ.

## ພາກທີ III
## ການສົ່ງເສີມ ແລະ ພັດທະນາ ວຽກງານຫັດຖະກຳ

**ມາດຕາ 28. ການສົ່ງເສີມ ແລະ ພັດທະນາ ວຽກງານຫັດຖະກຳ**

ລັດ ສົ່ງເສີມ ແລະ ພັດທະນາ ວຽກງານຫັດຖະກຳ ດ້ວຍການໃຫ້ນະໂຍບາຍ ແລະ ປະຕິບັດມາດຕະການ ຕົ້ນຕໍ ດັ່ງນີ້:

1. ທຶນ ແລະ ກອງທຶນ ;
2. ພາສີ ແລະ ອາກອນ ;
3. ການປົກປ້ອງສິນຄ້າຫັດຖະກຳ ;
4. ການສະໜອງຂໍ້ມູນຂ່າວສານ ;
5. ການຕະຫຼາດ ;
6. ການນຳໃຊ້ເຕັກໂນໂລຊີ ;
7. ການໃຫ້ຄຳປຶກສາ ;
8. ການຝຶກອົບຮົມ ແລະ ຍົກລະດັບສີມືແຮງງານ ;

9. ສູນສົ່ງເສີມຫັດຖະກຳ ;

10. ສູນຝຶກອົບຮົມວິຊາຊີບຫັດຖະກຳ ;

11. ການສ້າງຕັ້ງກຸ່ມຜູ້ຜະລິດທຸລະກິດຫັດຖະກຳ .

**ມາດຕາ 29. ທຶນ ແລະ ກອງທຶນ**

ລັດ ສະໜອງງົບປະມານໃຫ້ແກ່ການຊຸກຍູ້ສົ່ງເສີມວຽກງານຫັດຖະກຳ ເຊັ່ນ : ສ້າງສູນສົ່ງເສີມຫັດຖະກຳ, ສ້າງສູນຝຶກອົບຮົມວິຊາຊີບຫັດຖະກຳ, ກໍ່ສ້າງ ແລະ ປັບປຸງໂຮງຮຽນວິຈິດຕະກຳ ແລະ ງົບປະມານດັດສົມສົ່ງເສີມວິຊາການ.

ກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ ກຳນົດນະໂຍບາຍສິນເຊື່ອດອກເບ້ຍຕ່ຳ ດ້ວຍການນຳໃຊ້ຫຼາຍລະບົບຄ້ຳປະກັນສິນເຊື່ອ ໃຫ້ແກ່ຜູ້ປະກອບການຫັດຖະກຳ ຢ່າງເໝາະສົມ.

ກອງທຶນພັດທະນາຫັດຖະກຳ ສ້າງຕັ້ງຂຶ້ນ ດ້ວຍການປະກອບສ່ວນທຶນຈາກ ສະມາຊິກຂອງ ສະມາຄົມຫັດຖະກຳ, ຜູ້ປະກອບການຫັດຖະກຳ, ການຊ່ວຍເຫຼືອຂອງລັດ, ອົງການຈັດຕັ້ງສັງຄົມ, ບັນດາຫົວໜ່ວຍເສດຖະກິດ ແລະ ບຸກຄົນ ທັງພາຍໃນແລະຕ່າງປະເທດ.

**ມາດຕາ 30. ພາສີ ແລະ ອາກອນ**

ລັດ ສົ່ງເສີມວຽກງານຫັດຖະກຳດ້ວຍການວາງນະໂຍບາຍດ້ານພາສີ ແລະ ອາກອນ ຕາມຄວາມເໝາະສົມ ເພື່ອພັດທະນາວຽກງານຫັດຖະກຳ ໃຫ້ມີຄວາມເຂັ້ມແຂງ ແລະ ຂະຫຍາຍຕົວ.

**ມາດຕາ 31. ການປົກປ້ອງສິນຄ້າຫັດຖະກຳ**

ລັດ ປົກປ້ອງສິນຄ້າຫັດຖະກຳ ດ້ວຍການປຸກຈິດສຳນຶກຂອງທົ່ວສັງຄົມ ໃນນັ້ນ ອົງການລັດ ຕ້ອງເປັນແບບຢ່າງໃນການຊົມໃຊ້ສິນຄ້າຫັດຖະກຳ ພ້ອມດຽວກັນ ກໍໃຫ້ເອົາໃຈໃສ່ ນຳໃຊ້ມາດຕະການທີ່ຈຳເປັນໃນການຄວບຄຸມ ການນຳເຂົ້າສິນຄ້າຫັດຖະກຳ ເປັນຕົ້ນ : ການກວດກາຄຸນນະພາບ ແລະ ມາດຕະຖານເຕັກນິກຂອງຜະລິດຕະພັນ ແລະ ມາດຕະການອື່ນ.

**ມາດຕາ 32. ການສະໜອງຂໍ້ມູນຂ່າວສານ**

ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ສະໜອງຂໍ້ມູນຂ່າວສານໃຫ້ແກ່ຜູ້ປະກອບການກ່ຽວກັບວຽກງານຫັດຖະກຳ ເຊັ່ນ : ຂໍ້ມູນຂ່າວສານ ກ່ຽວກັບການດຳເນີນການຜະລິດ, ການຕະຫຼາດ, ລາຄາ, ແຫຼ່ງທຶນ, ແຫຼ່ງວັດຖຸດິບ ແລະ ອື່ນໆ ດ້ວຍຮູບການ ສຳມະນາ ແລະ ໂຄສະນາ ເຜີຍແຜ່ຜ່ານພາຫະນະສື່ມວນຊົນຕ່າງໆ.

**ມາດຕາ 33. ການຕະຫຼາດ**

ຂະແໜງການອຸດສາຫະກຳແລະການຄ້າ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ຮ່ວມກັບ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ, ສະມາຄົມຫັດຖະກຳລາວ, ຊາວຊ່າງຫັດຖະກຳ ຊອກຫາຕະຫຼາດພາຍໃນ ແລະ

ຕ່າງປະເທດ ດ້ວຍຫຼາຍຮູບການ ເປັນຕົ້ນ: ການໂຄສະນາ, ການວາງສະແດງສິນຄ້າ, ການຈັດງານຕະຫຼາດນັດ ແລະ ຕະຫຼາດອື່ນ ພ້ອມທັງ ປຸກລະດົມໃຫ້ມີການຊົມໃຊ້ຜະລິດຕະພັນຫັດຖະກຳພາຍໃນ ຢ່າງກວ້າງຂວາງ.

### ມາດຕາ 34. ການນຳໃຊ້ເຕັກໂນໂລຊີ

ລັດ ຊຸກຍູ້ສົ່ງເສີມທຸກພາກສ່ວນເສດຖະກິດ ເອົາໃຈໃສ່ໃນການສຶກສາຄົ້ນຄວ້າ, ພັດທະນາ ແລະ ອະນຸລັກກຳມະວິທີການຜະລິດຫັດຖະກຳແບບພື້ນເມືອງ ພ້ອມກັນນັ້ນ ກໍຕ້ອງຍາດແຍ່ງເອົາການນຳໃຊ້ເຕັກໂນໂລຊີທີ່ກ້າວໜ້າ ໂດຍມີການເລືອກເຟັ້ນຢ່າງເໝາະສົມ ເຂົ້າໃນຂະບວນການຜະລິດຂອງຕົນເພື່ອໃຫ້ຜົນຜະລິດຫັດຖະກຳມີຄຸນນະພາບສູງ ສາມາດແຂ່ງຂັນຢູ່ ຕະຫຼາດພາຍໃນ ແລະ ສາກົນ.

### ມາດຕາ 35. ການໃຫ້ຄຳປຶກສາ

ຂະແໜງການອຸດສາຫະກຳ ແລະ ການຄ້າ ໂດຍສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ໃຫ້ຄຳປຶກສາ ຕາມການສະເໜີຂອງຜູ້ປະກອບການຫັດຖະກຳ ກ່ຽວກັບ ການດຳເນີນກິດຈະການຫັດຖະກຳ ເປັນຕົ້ນ: ໃຫ້ຄຳປຶກສາທາງດ້ານລະບຽບກົດໝາຍ, ການສ້າງຕັ້ງ, ແຫຼ່ງວັດຖຸດິບ, ການຕະຫຼາດ, ລາຄາ, ການແກ້ໄຂຂໍ້ຂັດແຍ່ງ ແລະ ກິດຈະການອື່ນ.

ລັດ ຊຸກຍູ້ສົ່ງເສີມໃຫ້ບຸກຄົນ ແລະ ການຈັດຕັ້ງ ສ້າງຕັ້ງ ຫ້ອງການໃຫ້ຄຳປຶກສາ ແກ່ຜູ້ປະກອບການຫັດຖະກຳ.

### ມາດຕາ 36. ການຝຶກອົບຮົມ ແລະ ຍົກລະດັບສີມືແຮງງານ

ຂະແໜງການອຸດສາຫະກຳ ແລະ ການຄ້າ, ຂະແໜງການສຶກສາ, ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ, ຂະແໜງການຖະແຫຼງຂ່າວ ແລະ ວັດທະນະທຳ, ອົງການຈັດຕັ້ງມະຫາຊົນ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ, ສະມາຄົມຫັດຖະກຳລາວ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ຈັດຕັ້ງການຝຶກອົບຮົມວິຊາຊີບຫັດຖະກຳ ແລະ ຍົກລະດັບສີມືແຮງງານຕາມຄວາມຮັບຜິດຊອບຂອງຕົນ ເພື່ອເພີ່ມປະສິດທິພາບຂອງການຜະລິດ, ການບໍລິການ ແລະ ຍົກລະດັບຄວາມສາມາດຄຸ້ມຄອງບໍລິຫານຂອງຜູ້ປະກອບການຫັດຖະກຳ.

### ມາດຕາ 37. ສູນສົ່ງເສີມຫັດຖະກຳ

ສູນສົ່ງເສີມຫັດຖະກຳ ສ້າງຂຶ້ນ ເພື່ອເປັນບ່ອນ ວາງສະແດງ ແລະ ຈຳໜ່າຍສິນຄ້າ ຫັດຖະກຳ, ຝຶກອົບຮົມ ແລະ ຍົກລະດັບວິຊາຊີບ ທັງເປັນບ່ອນ ຄົ້ນຄວ້າ, ສາທິດການຜະລິດ, ເປີດກອງປະຊຸມ ວິຊາການ ເພື່ອແລກປ່ຽນບົດຮຽນຊຶ່ງກັນແລະກັນ, ເຈລະຈາຊື້ຂາຍ, ຮ່ວມມື ແລະ ຊ່ວຍເຫຼືອລະຫວ່າງຊາວຊ່າງຫັດຖະກຳດ້ວຍກັນ ທັງເປັນຫໍພິພິດທະພັນເພື່ອອະນຸລັກ ແນໃສ່ພັດທະນາວຽກງານຫັດຖະກຳ ໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ.

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນສົ່ງເສີມຫັດຖະກຳ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 38. **ສູນຝຶກອົບຮົມວິຊາຊີບຫັດຖະກຳ**

ລັດ ສົ່ງເສີມໃຫ້ທຸກພາກສ່ວນເສດຖະກິດ ແລະ ອົງການຈັດຕັ້ງສັງຄົມຕ່າງໆ ສ້າງສູນຝຶກອົບຮົມວິຊາຊີບຫັດຖະກຳ ເພື່ອຝຶກອົບຮົມ, ຍົກລະດັບສີມືແຮງງານ ໃຫ້ແກ່ຊາວຊ່າງຫັດຖະກຳ ແລະ ສ້າງໃຫ້ພົນລະເມືອງລາວ ມີວິຊາຊີບ, ມີວຽກເຮັດງານທຳ ທັງເປັນການອະນຸລັກ, ປົກປັກຮັກສາ ຫັດຖະກຳ ທີ່ເປັນມູນເຊື້ອ ແລະ ມີເອກະລັກສະເພາະຂອງລາວໄວ້.

ການຈຳໜ່າຍຜົນຜະລິດທີ່ໄດ້ຈາກການຝຶກອົບຮົມຢູ່ພາຍໃນສູນດັ່ງກ່າວ ໄດ້ຮັບການຍົກເວັ້ນ ພາສີ ແລະ ອາກອນ.

ມາດຕາ 39. **ການສ້າງຕັ້ງ ກຸ່ມຜູ້ຜະລິດທຸລະກິດຫັດຖະກຳ**

ຂະແໜງການອຸດສາຫະກຳ ແລະ ການຄ້າ ຄົ້ນຄວ້າສ້າງລະບຽບການເພື່ອອຳນວຍຄວາມສະດວກກ່ຽວກັບການສ້າງຕັ້ງ ກຸ່ມ, ສະມາຄົມ, ສະຫະກອນ ຜູ້ຜະລິດທຸລະກິດຫັດຖະກຳ ເພື່ອຊ່ວຍຊຸກຍູ້ສົ່ງເສີມ ໃຫ້ແກ່ການຈັດຕັ້ງດັ່ງກ່າວມີຄວາມເຂັ້ມແຂງ.

## ພາກທີ IV
## ການປົກປັກຮັກສາສິ່ງແວດລ້ອມ ແລະ ຄວາມປອດໄພຂອງຄົນງານ

ມາດຕາ 40. **ການປົກປັກຮັກສາສິ່ງແວດລ້ອມ**

ການດຳເນີນກິດຈະການໂຮງງານຫັດຖະກຳ ແລະ ໂຮງຊ່າງຫັດຖະກຳຄອບຄົວ ຕ້ອງປະຕິບັດ ຕາມລະບຽບກົດໝາຍ ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ເພື່ອແກ້ໄຂ ຫຼື ຫຼຸດຜ່ອນຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ ເຊັ່ນ: ອາຍພິດ, ຝຸ່ນ, ສິ່ງເສດເຫຼືອ ແລະ ນໍ້າເປື້ອນ, ຄວັນ, ສຽງ, ສີ, ແສງ, ກິ່ນ, ຄວາມສັ່ນສະເທືອນ, ອຸນຫະພູມ, ຄວາມຊຸ່ມ ແລະ ອື່ນໆ.

ມາດຕາ 41. **ການກຳຈັດ ແລະ ການບຳບັດສິ່ງເສດເຫຼືອຈາກໂຮງງານ**

ສິ່ງເສດເຫຼືອຈາກໂຮງງານຫັດຖະກຳ ແລະ ໂຮງຊ່າງຫັດຖະກຳຄອບຄົວ ຕ້ອງກຳຈັດ ແລະ ບຳບັດຕາມເຕັກນິກວິຊາການ ແລະ ຕາມສະຖານທີ່ ທີ່ໄດ້ກຳນົດໃຫ້.

ມາດຕາ 42. **ຄວາມປອດໄພ ແລະ ສະຫວັດດີການຂອງຄົນງານ**

ໂຮງງານຫັດຖະກຳ ຕ້ອງຮັບປະກັນຄວາມປອດໄພ, ສຸຂານາໄມ ແລະ ສະຫວັດດີການ ຂອງຜູ້ອອກແຮງງານ ຕາມລະບຽບກົດໝາຍກ່ຽວກັບແຮງງານ.

ໂຮງຊ່າງຫັດຖະກຳຄອບຄົວ ປະເພດ I ຕ້ອງເຮັດສັນຍາແຮງງານ, ເບີກຈ່າຍຄ່າແຮງງານຕາມກຳນົດເວລາ, ຮັບປະກັນຄວາມປອດໄພ, ສຸຂານາໄມ ແລະ ສະຫວັດດີການຂັ້ນພື້ນຖານ.

ໂຮງຊ່າງຫັດຖະກຳຄອບຄົວ ປະເພດ II ກໍຕ້ອງປະຕິບັດຄືກັນກັບໂຮງຊ່າງຫັດຖະກຳຄອບຄົວ ປະເພດ I ໃນກໍລະນີທີ່ມີການນຳໃຊ້ແຮງງານອື່ນ ນອກຈາກສະມາຊິກຄອບຄົວຂອງຕົນ .

## ພາກທີ V
## ສິດ, ໜ້າທີ່ ແລະ ພັນທະຂອງຜູ້ປະກອບການ

ມາດຕາ 43. **ສິດ ແລະ ໜ້າທີ່ ຂອງຜູ້ປະກອບການ**

ຜູ້ປະກອບການຫັດຖະກຳ ມີສິດ ແລະ ໜ້າທີ່ ດັ່ງນີ້ :

1. ໄດ້ຮັບນະໂຍບາຍສົ່ງເສີມ ແລະ ພັດທະນາ ຈາກລັດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕາມກົດໝາຍ ;
2. ໄດ້ຮັບການປົກປ້ອງ ສິດ ຜົນປະໂຫຍດ ແລະ ກຳມະສິດອັນຊອບທຳຂອງຕົນ ຕາມກົດໝາຍ ;
3. ໃຫ້ການຮ່ວມມືກັບທ້ອງຖິ່ນທີ່ຕົນດຳເນີນກິດຈະການ, ປະກອບສ່ວນເຂົ້າໃນການຊອກວຽກເຮັດງານທຳ, ແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ມີສ່ວນຮ່ວມໃນວຽກງານປ້ອງກັນຄວາມສະຫງົບສຸກຂອງປະຊາຊົນໃນທ້ອງຖິ່ນ ;
4. ປະຕິບັດສິດ ແລະ ໜ້າທີ່ອື່ນກ່ຽວກັບວຽກງານຫັດຖະກຳ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ມາດຕາ 44. **ພັນທະ ຂອງຜູ້ປະກອບການ**

ຜູ້ປະກອບການຫັດຖະກຳ ມີພັນທະ ດັ່ງນີ້:

1. ເຄົາລົບ, ປະຕິບັດລະບຽບກົດໝາຍກ່ຽວກັບວຽກງານຫັດຖະກຳ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ;
2. ປົກປັກຮັກສາສິ່ງແວດລ້ອມຕາມລະບຽບກົດໝາຍ;
3. ປະຕິບັດຕາມກົດໝາຍວ່າດ້ວຍບັນຊີ ສຳລັບໂຮງງານຫັດຖະກຳ ;
4. ປະຕິບັດຕາມກົດໝາຍວ່າດ້ວຍພາສີ ແລະອາກອນ ;
5. ປະຕິບັດ ພັນທະອື່ນກ່ຽວກັບວຽກງານຫັດຖະກຳ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ພາກທີ VI
## ຂໍ້ຫ້າມ

ມາດຕາ 45. **ຂໍ້ຫ້າມສຳລັບຜູ້ປະກອບການ**

ຫ້າມຜູ້ປະກອບການ ມີພຶດຕິກຳ ຕົ້ນຕໍ ດັ່ງນີ້:

1. ທຳລາຍ ຫຼື ປ່ຽນແປງ ເອກະລັກ ຫັດຖະກຳຂອງຊາດ ຫຼື ຂອງຊົນເຜົ່າ ;
2. ເມີນເສີຍ ແລະ ຂາດຄວາມຮັບຜິດຊອບຕໍ່ການປົກປັກຮັກສາສິ່ງແວດລ້ອມ ຫຼື ການປ້ອງກັນຄວາມປອດໄພ ແລະ ສະຫວັດດີການຂອງຄົນງານ;
3. ນຳເອົາສິນຄ້າຫັດຖະກຳຂອງປະເທດອື່ນ ມາໂຄສະນາເຜີຍແຜ່ ຫຼື ແອບອ້າງວ່າເປັນສິນຄ້າຫັດຖະກຳ ຂອງລາວ.

ມາດຕາ 46. **ຂໍ້ຫ້າມສຳລັບເຈົ້າໜ້າທີ່, ພະນັກງານ, ບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມ ເຈົ້າໜ້າທີ່, ພະນັກງານ, ບຸກຄົນ ແລະ ການຈັດຕັ້ງອື່ນ ມີພຶດຕິກຳ ຕົ້ນຕໍ ດັ່ງນີ້:

1. ຂາດຄວາມຮັບຜິດຊອບ, ເມີນເສີຍ ຕໍ່ໜ້າທີ່ວຽກງານການຄຸ້ມຄອງ ການສົ່ງເສີມ ແລະ ພັດທະນາ ວຽກງານຫັດຖະກຳ ;
2. ປອມແປງ, ທຳລາຍ ເອກະສານ ກ່ຽວກັບຫັດຖະກຳ;
3. ກີດໜ່ວງ ຖ່ວງດຶງການດຳເນີນກິດຈະການຫັດຖະກຳ ຫຼື ການດຳເນີນຄະດີ ທີ່ເນື່ອງມາຈາກ ການລະເມີດລະບຽບກົດໝາຍ ກ່ຽວກັບຫັດຖະກຳ.

## ພາກທີ VII
## ການແກ້ໄຂຂໍ້ຂັດແຍ່ງ

ມາດຕາ 47. **ຫຼັກການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບ ວຽກງານຫັດຖະກຳ ຕ້ອງປະຕິບັດຕາມຫຼັກການທົ່ວໄປຂອງການແກ້ໄຂ ຂໍ້ຂັດແຍ່ງທາງດ້ານບໍລິຫານ ແລະ ທາງແພ່ງ ບົນພື້ນຖານຄວາມສາມັກຄີ ແລະ ການປະນີປະນອມກັນ.

ມາດຕາ 48. **ຮູບການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບວຽກງານຫັດຖະກຳ ສາມາດດຳເນີນດ້ວຍຮູບການຕາມລຳດັບ ດັ່ງນີ້:

1. ການປຶກສາຫາລື ຫຼື ການປະນີປະນອມກັນ;
2. ການແກ້ໄຂທາງດ້ານບໍລິຫານ ໂດຍອົງການຄຸ້ມຄອງວຽກງານຫັດຖະກຳ ຫຼື ສະມາຄົມຫັດຖະກຳ ຫຼື ກຸ່ມ ຜູ້ຜະລິດທຸລະກິດຫັດຖະກຳ;
3. ການແກ້ໄຂ ໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການແກ້ໄຂ ຕາມຂະບວນການຍຸຕິທຳ.

## ພາກທີ VIII
## ການຄຸ້ມຄອງ ແລະ ການກວດກາ

### ໝວດທີ 1
### ການຄຸ້ມຄອງ

ມາດຕາ 49. ອົງການຄຸ້ມຄອງ

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານຫັດຖະກຳ ຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວປະເທດ ໂດຍມອບໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ເປັນໃຈກາງ ປະສານສົມທົບກັບຂະແໜງການອື່ນທີ່ ກ່ຽວຂ້ອງ ລວມທັງອົງການປົກຄອງທ້ອງຖິ່ນ ໃນການຄຸ້ມຄອງ ແລະ ສົ່ງເສີມ ພັດທະນາວຽກງານຫັດຖະກຳ.

ອົງການຄຸ້ມຄອງວຽກງານຫັດຖະກຳ ປະກອບດ້ວຍ:

1. ກະຊວງອຸດສາຫະກຳ ແລະ ການຄ້າ;
2. ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນ ;
3. ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ ;
4. ອົງການປົກຄອງບ້ານ.

**ມາດຕາ 50. ສິດ ແລະ ໜ້າທີ່ ຂອງກະຊວງອຸດສາຫະກຳ ແລະ ການຄ້າ**

ໃນການຄຸ້ມຄອງວຽກງານຫັດຖະກຳ ກະຊວງອຸດສາຫະກຳ ແລະ ການຄ້າ ມີ ສິດ ແລະ ໜ້າທີ່ ດັ່ງນີ້ :

1. ຄົ້ນຄວ້າຍຸດທະສາດ, ນະໂຍບາຍການສົ່ງເສີມ, ລະບຽບກົດໝາຍກ່ຽວກັບວຽກງານຫັດຖະກຳ ເພື່ອສະເໜີລັດຖະບານ ພິຈາລະນາ;
2. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຫັດຖະກຳ;
3. ໂຄສະນາເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍ, ສະໜອງຂໍ້ມູນຂ່າວສານ, ອຳນວຍຄວາມສະດວກໃຫ້ແກ່ຜູ້ປະກອບການຫັດຖະກຳ ;
4. ຊີ້ນຳ ແລະ ຕິດຕາມ ການຈັດຕັ້ງປະຕິບັດວຽກງານຫັດຖະກຳໃນຂອບເຂດທົ່ວປະເທດ;
5. ພິຈາລະນາ ການສ້າງຕັ້ງ, ການແຈ້ງຂຶ້ນ ຫຼື ຖອນ ໃບທະບຽນວິສາຫະກິດ ໂຮງງານຫັດຖະກຳ ຂະໜາດ I;
6. ແກ້ໄຂຂໍ້ຂັດແຍ່ງກ່ຽວກັບວຽກງານຫັດຖະກຳ;
7. ສ້າງບຸກຄະລາກອນກ່ຽວກັບການຄຸ້ມຄອງ ແລະ ການຜະລິດຫັດຖະກຳ;
8. ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ທ້ອງຖິ່ນ ກ່ຽວກັບການຄຸ້ມຄອງ ແລະ ສົ່ງເສີມ ພັດທະນາວຽກງານຫັດຖະກຳ;
9. ເຮັດໜ້າທີ່ໂດຍກົງ ກ່ຽວກັບ ການສົ່ງເສີມ ແລະ ພັດທະນາວຽກງານຫັດຖະກຳ;
10. ພົວພັນ ຮ່ວມມືກັບສາກົນກ່ຽວກັບວຽກງານຫັດຖະກຳຕາມການມອບໝາຍຂອງລັດຖະບານ;
11. ສະຫຼຸບ, ປະເມີນຜົນ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຫັດຖະກຳ ເພື່ອລາຍງານ ລັດຖະບານ;
12. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ກ່ຽວກັບວຽກງານຫັດຖະກຳ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 51. ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນ**

ໃນການຄຸ້ມຄອງວຽກງານຫັດຖະກຳ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້ :

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຍຸດທະສາດ, ແຜນພັດທະນາ, ນະໂຍບາຍການສົ່ງເສີມ ແລະ ລະບຽບກົດໝາຍກ່ຽວກັບວຽກງານຫັດຖະກຳ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ;
2. ໂຄສະນາ ເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍ, ສະໜອງຂໍ້ມູນຂ່າວສານກ່ຽວກັບວຽກງານຫັດຖະກຳ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ;
3. ຊີ້ນຳ ແລະ ຕິດຕາມ ການຈັດຕັ້ງປະຕິບັດວຽກງານຫັດຖະກຳຂອງແຂວງ, ນະຄອນ, ຫ້ອງການອຸດ ສາຫະກຳ ແລະ ການຄ້າ ເມືອງ, ເທດສະບານ ;
4. ພິຈາລະນາ ການສ້າງຕັ້ງ, ການແຈ້ງຂຶ້ນ ຫຼື ຖອນ ໃບທະບຽນວິສາຫະກິດໂຮງງານຫັດຖະກຳຂະໜາດ II ແລະ III;
5. ແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບວຽກງານຫັດຖະກຳໃນຂອບເຂດຄວາມຮັບຜິດຊອບຂອງຕົນ ;
6. ເປັນໃຈກາງປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງກ່ຽວກັບການສົ່ງເສີມ ແລະ ພັດທະນາ ວຽກງານຫັດຖະກຳ ;
7. ພົວພັນ ຮ່ວມມືກັບສາກົນ ກ່ຽວກັບວຽກງານຫັດຖະກຳ ຕາມການມອບໝາຍຂອງກະຊວງອຸດສາຫະກຳ ແລະ ການຄ້າ ;
8. ສະຫຼຸບ, ປະເມີນຜົນ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຫັດຖະກຳ ເພື່ອລາຍງານເຈົ້າແຂວງ, ເຈົ້າຄອງນະຄອນ ແລະ ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ກ່ຽວກັບວຽກງານຫັດຖະກຳ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 52. ສິດ ແລະ ໜ້າທີ່ ຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ເທດສະບານ**

ໃນການຄຸ້ມຄອງວຽກງານຫັດຖະກຳ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດແຜນການ, ນະໂຍບາຍການສົ່ງເສີມ ພັດທະນາ, ລະບຽບກົດໝາຍ ກ່ຽວກັບວຽກງານຫັດຖະກຳ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍ, ສະໜອງຂໍ້ມູນຂ່າວສານກ່ຽວກັບວຽກງານຫັດຖະກຳ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ເປັນຈຸດປະສານງານ ສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງກ່ຽວກັບການຄຸ້ມຄອງ ແລະ ເຮັດໜ້າທີ່ໂດຍກົງ ກ່ຽວກັບການສົ່ງເສີມ, ພັດທະນາ ວຽກງານຂອງໂຮງຊ່າງຫັດຖະກຳຄອບຄົວ;
4. ປະສານສົມທົບກັບອົງການປົກຄອງບ້ານ ໃນການຈັດຕັ້ງປະຕິບັດວຽກງານຫັດຖະກຳ;
5. ເກັບກຳຂໍ້ມູນກ່ຽວກັບການຜະລິດຫັດຖະກຳໃນທ້ອງຖິ່ນຂອງຕົນ ;
6. ແກ້ໄຂຂໍ້ຂັດແຍ່ງກ່ຽວກັບວຽກງານຫັດຖະກຳ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
7. ສະຫຼຸບ, ປະເມີນຜົນ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຫັດຖະກຳ ເພື່ອລາຍງານ ຂັ້ນເທິງຂອງຕົນ;

8. ປະຕິບັດສິດ ແລະ ໜ້າທີ່ອື່ນ ກ່ຽວກັບວຽກງານຫັດຖະກໍາ ຕາມທີ່ໄດ້ມອບໝາຍ ແລະ ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 53. ຄວາມຮັບຜິດຊອບຂອງອົງການປົກຄອງບ້ານ**

ໃນການຄຸ້ມຄອງວຽກງານຫັດຖະກໍາ ອົງການປົກຄອງບ້ານ ມີຄວາມຮັບຜິດຊອບໃນການປະສານສົມທົບ ແລະ ໃຫ້ການຮ່ວມມື ກັບ ຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ, ເທດສະບານ, ຜູ້ປະກອບການຫັດຖະກໍາ, ສະມາຄົມຫັດຖະກໍາ, ກຸ່ມຜູ້ຜະລິດທຸລະກິດຫັດຖະກໍາ, ໂຮງງານຫັດຖະກໍາ ແລະ ໂຮງຊ່າງຫັດຖະກໍາຄອບຄົວ ໃນການປົກປັກຮັກສາສິ່ງແວດລ້ອມ, ຄວາມເປັນລະບຽບຮຽບຮ້ອຍ ແລະ ອໍານວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານຫັດຖະກໍາ ໃນຂອບເຂດບ້ານຂອງຕົນ.

**ມາດຕາ 54. ສິດ ແລະ ໜ້າທີ່ ຂອງຂະແໜງການແລະພາກສ່ວນອື່ນ**

ໃນການຄຸ້ມຄອງວຽກງານຫັດຖະກໍາ ບັນດາຂະແໜງການ, ອົງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງມີສິດ ແລະ ໜ້າທີ່ ປະສານສົມທົບ ກັບ ຂະແໜງການອຸດສາຫະກໍາ ແລະ ການຄ້າ ຂັ້ນຂອງຕົນ ໃນການອໍານວຍຄວາມສະດວກ, ຊຸກຍູ້ສົ່ງເສີມ ແລະ ພັດທະນາ ວຽກງານຫັດຖະກໍາ ຕາມພາລະບົດບາດຂອງຕົນ.

**ມາດຕາ 55. ຄວາມຮັບຜິດຊອບຂອງ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດ**

ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດ ເປັນອົງກອນຈັດຕັ້ງສັງຄົມ ຂອງນັກທຸລະກິດ ເປັນຂົວຕໍ່ລະຫວ່າງ ອົງການລັດ ແລະ ຫົວໜ່ວຍທຸລະກິດ ທັງເປັນຜູ້ອະນຸມັດ ສ້າງຕັ້ງ ກຸ່ມ, ສະມາຄົມ, ສະຫະກອນຜູ້ຜະລິດທຸລະກິດຫັດຖະກໍາ ແລະ ມີຄວາມຮັບຜິດຊອບໃນການສົ່ງເສີມການເຄື່ອນໄຫວ, ການຝຶກອົບຮົມ, ການວາງສະແດງ, ການພັດທະນາສີມືແຮງງານ, ການຕະຫຼາດ, ການໃຫ້ຂໍ້ມູນຂ່າວສານ, ການລະດົມທຶນໃນການສ້າງກອງທຶນ ແລະ ກິດຈະການອື່ນກ່ຽວກັບວຽກງານຫັດຖະກໍາ.

**ມາດຕາ 56. ຄວາມຮັບຜິດຊອບຂອງ ສະມາຄົມຫັດຖະກໍາລາວ**

ສະມາຄົມຫັດຖະກໍາລາວ ເປັນອົງກອນຈັດຕັ້ງສັງຄົມໜຶ່ງ ທີ່ເຕົ້າໂຮມຊາວຊ່າງຫັດຖະກໍາ ມີເປົ້າໝາຍສ້າງໃຫ້ເປັນກໍາລັງແຮງຕໍ່ລອງທາງດ້ານທຸລະກິດ; ດໍາເນີນການຄຸ້ມຄອງສົ່ງເສີມ ແລະ ພັດທະນາບັນດານັກທຸລະກິດທີ່ເປັນສະມາຊິກຂອງ ສະມາຄົມ ລວມທັງຜູ້ປະກອບການຫັດຖະກໍາ ທີ່ຍັງບໍ່ເປັນສະມາຊິກຂອງສະມາຄົມໃຫ້ຂະຫຍາຍຕົວ ທັງດ້ານປະລິມານ ແລະ ຄຸນນະພາບ ລວມທັງປຸກລະດົມຂົນຂວາຍເຂົາເຈົ້າໃຫ້ເຂົ້າສູ່ການຈັດຕັ້ງເປັນກຸ່ມ, ສະຫະກອນ, ສະມາຄົມ ຜູ້ຜະລິດທຸລະກິດຫັດຖະກໍາໃນຂອບເຂດທົ່ວປະເທດ.

ສະມາຄົມຫັດຖະກໍາລາວ ມີຄວາມຮັບຜິດຊອບໃນການຮ່ວມມືກັບພາກລັດ ໃນການຈັດຕັ້ງປະຕິບັດຍຸດທະສາດ ແລະ ແຜນການພັດທະນາສົ່ງເສີມ ຫັດຖະກໍາລາວ ໃຫ້ຂະຫຍາຍຕົວ ແລະ ກ້າວໜ້າ ພ້ອມດຽວກັນນີ້ຍັງເປັນເຈົ້າການໃນການປົກປັກຮັກສາ, ອະນຸລັກເອກະລັກ ຫັດຖະກໍາລາວ ແລະ ພັດທະນາສີໄມ້ລາຍມືອັນດີງາມຂອງປະຊາຊົນບັນດາເຜົ່າ ໄວ້ຄູ່ກັບຊາດລາວຕະຫຼອດໄປ, ຊຸກຍູ້ ແລະ ສົ່ງເສີມ ຊາວຊ່າງຫັດຖະກໍາໃຫ້ຜະລິດເຄື່ອງຫັດຖະກໍາເປັນສິນຄ້າທີ່ມີຄຸນນະພາບ ຮັບໃຊ້ພາຍໃນ ແລະ ສົ່ງອອກໃຫ້ນັບມື້ນັບຫຼາຍຂຶ້ນ.

## ໝວດທີ 2
## ການກວດກາ

**ມາດຕາ 57. ອົງການກວດກາ**

ອົງການກວດກາກາວຽກງານທັດຖະກຳ ແມ່ນອົງການດຽວກັນກັບ ອົງການຄຸ້ມຄອງວຽກງານທັດຖະກຳຕາມທີ່ໄດ້ກຳນົດໄວ້ໃນມາດຕາ 48 ຂອງກົດໝາຍສະບັບນີ້.

**ມາດຕາ 58. ສິດ ແລະ ໜ້າທີ່ ຂອງອົງການກວດກາ**

ອົງການກວດກາ ມີ ສິດ ແລະ ໜ້າທີ່ ໃນການກວດກາການປະຕິບັດລະບຽບກົດໝາຍກ່ຽວກັບວຽກງານ ທັດຖະກຳ ເປັນຕົ້ນ: ການກວດກາວຽກງານຄຸ້ມຄອງ, ວຽກງານຊຸກຍູ້ສົ່ງເສີມ ແລະ ພັດທະນາທັດຖະກຳຂອງຂະແໜງການຕ່າງໆ ແລະ ກວດກາ ການດຳເນີນການຜະລິດທຸລະກິດທັດຖະກຳ ແນໃສ່ຮັບປະກັນຄວາມຖືກຕ້ອງ ຕາມລະບຽບກົດໝາຍ.

**ມາດຕາ 59. ຮູບການກວດກາ**

ຮູບການກວດກາ ມີ ດັ່ງນີ້:

1. ກວດກາຕາມລະບົບປົກກະຕິ;
2. ກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ກວດກາແບບກະທັນຫັນ.

ການກວດກາດັ່ງກ່າວ ອາດຈະດຳເນີນບົນພື້ນຖານການຮ້ອງທຸກຂອງບຸກຄົນ ແລະ ການ ຈັດຕັ້ງ ຫຼື ຄຳສັ່ງຂອງອົງການລັດທີ່ມີສິດກ່ຽວຂ້ອງ ຫຼື ເມື່ອພົບເຫັນຮ່ອງຮອຍຂອງການລະເມີດລະບຽບກົດໝາຍກ່ຽວກັບວຽກງານທັດຖະກຳ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 60. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ໃນການຄຸ້ມຄອງ, ການສົ່ງເສີມ, ແລະ ການດຳເນີນຜະລິດທຸລະກິດທັດຖະກຳ ຈະໄດ້ຮັບການ ຍ້ອງຍໍ ຫຼື ນະໂຍບາຍອື່ນຕາມລະບຽບການ.

**ມາດຕາ 61. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫຼື ການຈັດງຕັ້ງ ທີ່ລະເມີດລະບຽບກົດໝາຍກ່ຽວກັບທັດຖະກຳ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ, ໃຊ້ແທນທາງແພ່ງ ຫຼື ລົງໂທດທາງອາຍາ ຕາມ ແຕ່ລະ ກໍລະນີ ເບົາ ຫຼື ໜັກ.

ມາດຕາ 62. ມາດຕະການສຶກສາອົບຮົມ

ບຸກຄົນ ຫຼື ການຈັດຕັ້ງ ທີ່ບໍ່ປະຕິບັດສິດ, ໜ້າທີ່ ແລະ ພັນທະຂອງຜູ້ປະກອບການ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 43, 44 ແລະ ລະເມີດຂໍ້ຫ້າມ ທີ່ໄດ້ກຳນົດໄວ້ໃນມາດຕາ 45 ຂອງກົດໝາຍສະບັບນີ້ ເປັນຄັ້ງທຳອິດ ເຊັ່ນ: ທຳລາຍ ຫຼື ປອມແປງ ເອກະລັກ ຫັດຖະກຳຂອງຊາດ ຫຼື ຂອງຊົນເຜົ່າ, ຊຶ່ງກໍ່ຄວາມເສຍຫາຍທີ່ມີມູນຄ່າຕໍ່າກວ່າຫ້າແສນກີບ ຈະຖືກກ່າວເຕືອນ ແລະ ສຶກສາອົບຮົມ.

ມາດຕາ 63. ມາດຕະການທາງວິໄນ

ເຈົ້າໜ້າທີ່, ພະນັກງານ ທີ່ລະເມີດລະບຽບກົດໝາຍກ່ຽວກັບວຽກງານຫັດຖະກຳ ແລະ ຂໍ້ຫ້າມທີ່ມີລັກສະນະເບົາບາງ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍ ທີ່ມີມູນຄ່າຕໍ່າກວ່າຫ້າແສນກີບ ແຕ່ບໍ່ມີຄວາມຈິງໃຈລາຍງານ, ຫຼົບຫຼີກຈາກຄວາມຜິດ ກຈະຖືກປະຕິບັດວິໄນ ຕາມແຕ່ລະກໍລະນີດັ່ງນີ້:

1. ຕິຕຽນ, ກ່າວເຕືອນຄວາມຜິດ ຕາມລະບຽບລັດຖະກອນ ພ້ອມທັງບັນທຶກໄວ້ ໃນສຳນວນເອກະສານ ຊີວະປະຫວັດຂອງຜູ້ກ່ຽວ;
2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ຫຼື ການຍ້ອງຍໍ;
3. ປົດຕຳແໜ່ງ ຫຼື ຍົກຍ້າຍ ໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕໍ່າກວ່າ;
4. ໃຫ້ອອກຈາກລັດຖະການໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

ມາດຕາ 64. ມາດຕະການປັບໃໝ

ບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດລະບຽບກົດໝາຍກ່ຽວກັບວຽກງານຫັດຖະກຳ ແລະ ຂໍ້ຫ້າມທີ່ມີລັກສະນະເບົາບາງ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍ ທີ່ມີມູນຄ່າເກີນກວ່າຫ້າແສນກີບ ຈະຖືກປັບໃໝເທົ່າຕົວຂອງມູນຄ່າຄວາມເສຍຫາຍ.

ໃນກໍລະນີ ທີ່ມີການລະເມີດເປັນຄັ້ງທີສອງ ຫຼື ເປັນອາຈິນ ຈະຖືກປັບໃໝສອງເທົ່າຕົວຂອງມູນຄ່າຄວາມເສັຍຫາຍ.

ມາດຕາ 65. ມາດຕະການທາງແພ່ງ

ບຸກຄົນ ຫຼື ການຈັດຕັ້ງ ທີ່ກໍ່ຄວາມເສຍຫາຍໃຫ້ແກ່ຜູ້ອື່ນ ແລະ ສັງຄົມ ເນື່ອງມາຈາກການເຄື່ອນໄຫວກິດຈະການທາງດ້ານຫັດຖະກຳ ຈະຕ້ອງໃຊ້ແທນຄ່າເສຍຫາຍ ຕາມທີ່ຕົນໄດ້ກໍ່ຂຶ້ນ.

ມາດຕາ 66. ມາດຕະການທາງອາຍາ

ບຸກຄົນ ທີ່ໄດ້ລະເມີດລະບຽບກົດໝາຍ ກ່ຽວກັບວຽກງານຫັດຖະກຳ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດ ຕາມກົດໝາຍອາຍາ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 67. ວັນຫັດຖະກຳແຫ່ງຊາດ**

ລັດ ກຳນົດເອົາ ວັນທີ 1 ເດືອນພະຈິກ ຂອງທຸກປີ ເປັນວັນຫັດຖະກຳແຫ່ງຊາດ ເພື່ອ ເປັນວັນເຕົ້າໂຮມຜູ້ປະກອບການ ແລະ ຊາວຊ່າງຫັດຖະກຳ ເພື່ອດຳເນີນກິດຈະກຳຮ່ວມກັນ ເຊັ່ນ: ການຈັດງານມະຫາກຳຫັດຖະກຳ, ການວາງສະແດງສິນຄ້າ, ການຈັດກອງປະຊຸມສຳມະນາ, ການແຂ່ງຂັນຜະລິດຕະພັນ ເພື່ອຊີງລາງວັນຜະລິດຕະພັນຫັດຖະກຳດີເດັ່ນປະຈຳປີ ແລະ ກິດຈະກຳອື່ນ.

**ມາດຕາ 68. ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດ ກົດໝາຍສະບັບນີ້.

**ມາດຕາ 69. ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງເກົ້າສິບວັນ ນັບແຕ່ວັນ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບ ກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ທອງສິງ ທຳມະວົງ